# ໜັງສືຄຳປາກົດ

**ໃຈຄວາມສຳຄັນ:** ພຣະເຈົ້າຈິງມີໄຊຊະນະໃນສັບພະທຸກສິ່ງ

**ຈຳນວນບົດ:** ໒໒ ບົດ

## ວ່າດ້ວຍຜູ້ຂຽນ:

ຜູ້ຂຽນໜັງສືນີ້ແມ່ນທ່ານໂຢຮັນ (໑:໔,໙;໒໒:໘) ເຖິງເພິ່ນບໍ່ຂຽນບອກວ່າ ເພິ່ນເປັນອັຄສາວົກກໍດີ ແຕ່ພວກຄຣູສອນກໍຖືກັນວ່າ ແມ່ນທ່ານໂຢຮັນຜູ້ເປັນອັຄສາວົກນັ້ນ ຫລືແມ່ນຜູ້ທີ່ຂຽນໜັງສືຂ່າວປະເສີດກັບຈົດໝາຍທັງສາມສະບັບນັ້ນ

ຢ່າງໃດກໍດີ ມີລາງຄົນຄິດວ່າ ໜັງສືນີ້ບໍ່ແມ່ນທ່ານໂຢຮັນຂຽນ ເພາະລັກສະນະແຫ່ງການຂຽນບໍ່ເໝືອນກັບໜັງສືອື່ນ ໆ ທີ່ເພິ່ນເຄີຍຂຽນນັ້ນ ຄວາມຈິງແລ້ວ ໜັງສືນີ້ເປັນໜັງສືພິເສດແທ້ ເພາະເພິ່ນຂຽນເປັນຄຳປາກົດທີ່ມາຈາກພຣະເຢຊູ ຊຶ່ງຈະເກີດມີມາໃນພາຍໜ້າ ແລະບ່ອນທີ່ເພິ່ນຂຽນໜັງສືນີ້ກໍແມ່ນເກາະປັດໂມ ຄືຂຽນໃນເວລາທີ່ເພິ່ນຖືກຈອງຈຳ ເພາະເຫັນແກ່ນາມຊື່ຂອງພຣະເຢຊູ (໑:໙)

## ວ່າດ້ວຍເວລາທີ່ຂຽນ:

ມີຄຣູສອນລາງຄົນຄິດວ່າ ໜັງສືນີ້ໄດ້ຂຽນໃນຣະຫວ່າງປີ ຄ.ສ. ໖໘–໖໙ ຄືຂຽນກ່ອນວິຫານໃນກຸງເຢຣູຊາເລັມຖືກທຳລາຍ ແຕ່ພວກຄຣູສອນສ່ວນຫລາຍໄດ້ຄິດວ່າ ໜັງສືນີ້ທ່ານໂຢຮັນໄດ້ຂຽນຣະຫວ່າງປີ

ຄ.ສ. ໙໔ ຄືພາຍຫລັງວິຫານຖືກທຳລາຍແລ້ວ ແລະໃນຄາວນັ້ນແມ່ນໂດມິຊຽນເປັນຜູ້ປົກຄອງ ຈຶ່ງເປັນຜູ້ມີຫົວຮຸນແຮງໂດຍໄດ້ຕໍ່ສູ້ກັບພວກຄຣິສຕຽນຢ່າງໜັກ

## ວ່າດ້ວຍຜູ້ຮັບ:

ທ່ານໂຢຮັນຂຽນໜັງສືນີ້ສຳລັບຜູ້ຮັບໃຊ້ທັງຫລາຍຂອງພຣະເຢຊູ-ຄຣິດ ເພື່ອບອກໃຫ້ພວກເຂົາຮູ້ວ່າແມ່ນຫຍັງຈະເກີດຂຶ້ນໃນພາຍໜ້າ (໑:໑; ໒໒:໖) ແລະຂຽນເຖິງໜ່ອຍຄຣິສຕະຈັກທັງເຈັດໃນເຂດອາເຊັຍ (໑:໔) ສະນັ້ນຈຶ່ງສະແດງໃຫ້ເຫັນວ່າຄຳປາກົດກໍແມ່ນສຳລັບພວກຄຣິສຕະຈັກໃນທົ່ວໂລກນີ້

## ຄວາມເຫັນກ່ຽວກັບໜັງສືຄຳປາກົດ:

ຄວາມຈິງແລ້ວ ໜັງສືຄຳປາກົດເປັນໜັງສືທີ່ເຂົ້າໃຈຍາກຫລາຍ ຈົນຕ່າງຄົນຕ່າງອ່ານຕ່າງຄົນຕ່າງເຂົ້າໃຈ ສະນັ້ນຈຶ່ງຂໍສະຣຸບຄວາມເຫັນຂອງທ່ານຜູ້ອ່ານໄວ້ໃນທີ່ນີ້ດ້ວຍ ຊຶ່ງມີສີ່ຄວາມເຫັນດ້ວຍກັນຄື :

໑. ບາງທ່ານແປຄວາມໝາຍວ່າ ຄຳທຳນວາຍສ່ວນຫລາຍໄດ້ເຖິງທີ່ສຳເຣັດຕັ້ງແຕ່ເວລາທ່ານໂຢຮັນໄດ້ຂຽນໜັງສືນີ້ ຄວາມເຫັນນີ້ກໍຖືກຕ້ອງຢູ່ ແຕ່ຖືກສ່ວນນ້ອຍ ເພາະຄຳທຳນວາຍສ່ວນຫລາຍຍັງບໍ່ສຳເຣັດ

໒. ບາງທ່ານແປຄວາມໝາຍວ່າ ຕັ້ງແຕ່ບົດທີສີ່ເປັນຕົ້ນໄປ ຄຳທຳ-ນວາຍທຸກຂໍ້ກ່ຽວກັບຄວາມສຸດທ້າຍຄືເມື່ອຄາວພຣະອົງຈະສະເດັດມາ ແລະຄາວເມື່ອສັດຕຣູຂອງພຣະຄຣິດຈະມາປາກົດ

໓. ບາງທ່ານແປຄວາມໝາຍວ່າ ເຫດການຕ່າງ ໆ ທີ່ບອກໄວ້ໃນໜັງສືນີ້ ຈະເຖິງທີ່ສຳເຣັດເປັນລຳດັບໄປ ຄື ນັບຕັ້ງແຕ່ຄາວເຣີ່ມຕົ້ນຂອງ ຄຣິສຕະຈັກຕລອດເຖິງສິ້ນສຸດ

໔. ບາງທ່ານມີຄວາມເຫັນວ່າ ນິມິດແລະເຫດການຕ່າງ ໆ ນັ້ນເປັນພຽງ ຂໍ້ປຽບທຽບ ຫລືສັນຍາລັກສະນະ ຊຶ່ງບໍ່ແມ່ນເປັນເຫດທີ່ຈະເກີດມາແທ້

ສະນັ້ນເພື່ອເປັນການດີ ຄວນຈະຍຶດຖືເອົາຄວາມເຫັນທັງສີ່ນີ້ໄປພ້ອມ ໆ ກັນ ເພາະຄວາມເຫັນຂອງແຕ່ລະທ່ານກໍມີຖືກມີຜິດ ຖ້າເຮົາຍຶດຖືເອົາຄວາມເຫັນທັງສີ່ນີ້ ກໍເທົ່າກັບວ່າຊ່ອຍໃຫ້ເຮົາມີຄວາມເຫັນຖືກ. ອັນນຶ່ງ ໄດ້ມີຄຣູສອນຫລາຍຄົນທີ່ບໍ່ຍອມຮັບເອົາຄວາມເຫັນຂອງບຸກຄົນອື່ນ ມີແຕ່ຖືເອົາຄວາມເຫັນຂອງຕົນຝ່າຍດຽວ ຖ້າໃຜບໍ່ຄິດເໝືອນຕົນກໍຖືວ່າຜິດ ແຕ່ສຳລັບທ່ານຜູ້ອ່ານທັງຫລາຍ ຂໍຢ່າເປັນເຊັ່ນນັ້ນ ຂໍໃຫ້ເຄົາຣົບນັບຖືຄວາມເຫັນຂອງບຸກຄົນອື່ນດ້ວຍ ເພາະບໍ່ມີໃຜສາມາດເວົ້າໄດ້ວ່າ ຕົນນີ້ແລະຄືຜູ້ຮູ້ທຸກສິ່ງຕາມຄວາມເປັນຈິງ

## ຄວາມສຳຄັນຂອງໜັງສືນິມິດນີ້:

໑. ເພາະເປັນພຣະຄຳພີທີ່ຂຽນຂຶ້ນເມື່ອພາຍຫລັງສຸດ ແລະເປັນຄຳສອນ ໃຫ້ຮູ້ໜັງສືຂ່າວປະເສີດແລະຈົດໝາຍທັງຫລາຍນັ້ນໄດ້ເຖິງທີ່ສຳເຣັດ

໒. ເພາະເປັນໜັງສືທີ່ເວົ້າເຖິງເຫດການທີ່ຈະເກີດມີມາໃນຄາວສິ້ນໂລກ ແລະເປັນໜັງສືບອກໄຊຊະນະຂອງພຣະມະຫາກະສັດຜູ້ຍິ່ງໃຫຍ່ ພ້ອມ

ທັງບອກການທຳລາຍແລະຄວາມສິບຫາຍຂອງພະຍາມານ

ຝ. ເພາະໃນພຣະຄັມພີນັ້ນມີແຕ່ພຽງສິ່ງເທົ່ານັ້ນທີ່ຂຽນບອກວ່າ ຜູ້ທີ່ອ່ານ ຜູ້ທີ່ເຊື່ອຟັງຄວາມທຳນວາຍ ແລະຜູ້ທີ່ປະຕິບັດຕາມຂໍ້ຄວາມທີ່ຂຽນໄວ້ນັ້ນ ກໍມີຄວາມສຸກຫລາຍ (໑:໓; ໒໒:໗)

## ວ່າດ້ວຍເລຂແລະຄວາມໝາຍຂອງເລຂ:

໑. ວ່າດ້ວຍເລຂເຈັດ (໗)

ກ. ຄຳວ່າ "ຈົດໝາຍເຈັດສະບັບທີ່ຝາກເຖິງຄຣິສຕະຈັກ ໗ ໜ່ວຍນັ້ນ" ໝາຍເຖິງຄຣິສຕະຈັກທຸກສໄມໃນທົ່ວໂລກນີ້ (ບົດ ໒–໓)

ຂ. ຄຳວ່າ "ຕາເອັນ ໗ ໜ່ວຍ" ໝາຍເຖິງການພິພາກສາລົງໂທດຂອງພຣະເຈົ້າທີ່ມີສືບ ໆ ມາຈົນເຖິງທຸກວັນນີ້ ເຊັ່ນຄວາມຍຸ່ງຍາກວຸ້ນວາຍແລະການຣົບຣາຂ້າຟັນກັນເປັນຕົ້ນ (ບົດ ໖–໙)

ຄ. ຄຳວ່າ "ນິມິດ ໗ ຢ່າງ" ໝາຍເຖິງລັກສະນະແຫ່ງການພິພາກສາຕ່າງ ໆ ຂອງພຣະເຈົ້າ (໙:໒–໑໑:໑໖)

ງ. ຄຳວ່າ "ຂັນ ໗ ໜ່ວຍ" ໝາຍເຖິງແປວໄຟທັງເຈັດທີ່ຈະຕົກລົງໃສ່ໂລກນີ້ (ບົດ ໑໕–໑໖)

ຈ. ໃນບົດທີ່ ໑:໔ ກໍມີພຣະວິນຍານທັງ ໗ ຊຶ່ງໝາຍເຖິງຄວາມສຳເຣັດອັນດີແຫ່ງພຣະວິນຍານ ແລະໃນບົດ ໑:໑໖ ດວງດາວ ໗ ໜ່ວຍທີ່ຢູ່ໃນພຣະຫັດກ້ຳຂວາຂອງພຣະອົງ ກໍໝາຍເຖິງອຳນາດປົກຄອງຂອງພຣະອົງທີ່ສຳເຣັດເທິງຄຣິສຕະຈັກ. ໃນ

ບົດທີ ໕:໑໒ ໄດ້ສະແດງບອກສະພາບ ແຫ່ງລູກແກະໄວ້ ໗ ຄວາມ ໃນບົດ ໗:໑໒ ກໍມີເຖິງ ໗ ຄວາມທີ່ກ່ຽວກັບພຣະເຈົ້າ

## ໖. ວ່າດ້ວຍເລຂເຄິ່ງຂອງເຈັດຫລືເລຂສາມເຄິ່ງ:

ເລຂເຄິ່ງນຶ່ງຂອງເຈັດຫລືເລຂສາມເຄິ່ງນີ້ ໝາຍເຖິງຄາວແຫ່ງຄວາມລຳບາກ ແລະການທໍຣະມານ ຊຶ່ງມີຢູ່ຫລາຍບ່ອນ ແຕ່ຄວາມໝາຍ ເປັນຢ່າງດຽວກັນດີ :

ກ. ໃນໜັງສືດານຽນ ໗:໒໕ ມີຄວາມວ່າ "ຍາມນຶ່ງກັບສອງຍາມ ແລະກັບເຄິ່ງຍາມ" ແລະໃນ ໑໒:໗ ວ່າ "ເຄິ່ງອາທິດ"

ຂ. ໃນຄຳປາກົດທີ ໑໑:໓ ກໍບອກຢ່າງດຽວກັນກັບດານຽນ ໑໒:໗ ບົດທີ ໑໓:໕ ບອກເຣື່ອງ ໔໒ ເດືອນກັບ ໑໒໖໐ ວັນຫລືສາມປີເຄິ່ງ ບົດທີ ໑໓:໖ ກໍບອກເວລານຶ່ງກັບເວລາທັງສອງ ແລະກັບເຄິ່ງເວລາ ແລະໃນບົດທີ ໑໑;໙,໑໑ ບອກວ່າມີພະຍານຢູ່ສອງຄົນໄດ້ເປັນພະຍານຢູ່ສາມວັນເຄິ່ງແລ້ວກໍຕາຍ

## ໗. ວ່າດ້ວຍເລຂ ໑໐:

ເລຂສິບໝາຍເຖິງຄວາມສຳເຣັດບໍຣິບູນທີ່ມີຢູ່ໃນພຣະເຈົ້າແລະມະນຸດ ສ໌ :

ກ. ໃນບົດ ໒:໑໐ ວ່າ ພຣະເຈົ້າປະທານພຣະບັນຍັດ ໑໐ ປະການ ໝາຍຄວາມວ່າ ຄຣິສຕະຈັກຈະມີຄວາມລຳບາກຢູ່ເຖິງ ໑໐ ວັນ ແລະທີ່ວ່າເຫັນໄພທໍຣະມານ ໑໐ ປະການຕົກຖືກຊາວເອຢິບ ກໍ

ໝາຍເຖິງຄວາມກຽດຊັງຂອງພຣະເຈົ້າທີ່ຕົກຖືກພວກເຂົານັ້ນ

ຂ. ໃນໜັງສືດານຽນ ບົດທີ ໗:໗,໒໔ ວ່າສັດຕົວທີ່ສີ່ມີເຂົາ ໑໐ ເຂົາ

ຄ. ໃນຄຳປາກົດ ໑໒:໓ ວ່າມີມັງກອນຕົວໃຫຍ່ມີເຂົາ ໑໐ ເຂົາ ແລະໃນ ໑໓:໑ ກໍ່ວ່າມີສັດຮ້າຍທີ່ມີເຂົາ ໑໐ ເຂົາ

## ໔. ວ່າດ້ວຍເລຂ ໑໒:

ເລຂ ໑໒ ໝາຍເຖິງແຜ່ນດິນຂອງພຣະເຈົ້າ ເລຂນີ້ໄດ້ມາຈາກ ໓×໔=໑໒ ຄື ໓ ໝາຍເຖິງ ພຣະເຈົ້າ ແລະ ໔ ໝາຍເຖິງມະນຸດ ສະນັ້ນຈຶ່ງເຫັນໄດ້ວ່າ ໓×໔ ຄືເລຂແຫ່ງຄຳສັນຍາທີ່ພຣະເຈົ້າຊົງຕັ້ງໄວ້ໃນພຣະຄັມພີເດີມ ສ່ວນໃນພຣະຄັມພີໃໝ່ກໍ່ບອກວ່າ ພຣະເຈົ້າຊົງສະຖິດຢູ່ໃນທ່າມກາງພວກເຂົາ ຄືໃນທ່າມກາງພວກ ໑໒ ຕະກູນ ແລະພວກສາວົກ ໑໒ ຄົນນັ້ນ

ໃນຄຳປາກົດ ໔:໔ ກໍບອກວ່າພວກເຖົ້າແກ່ ໒໔ ຄົນ (ຄືສອງເທື່ອ ໑໒) ປຽບເໝືອນຄຣິສຕະຈັກທີ່ຊົງໄຖ່ໄວ້ແລ້ວ ໃນບົດ ໑໒:໑ ບອກວ່າຜູ້ຍິງມີດາວ ໑໒ ດວງເປັນພວງມາໄລຄຽນຫົວ ໃນບົດ ໒໑:໑໒ ບອກວ່າກຸງເຢຣູຊາເລັມໃໝ່ມີປະຕູ ໑໒ ປ່ອງ ໃນຂໍ້ ໑໔ ບົດດຽວກັນບອກວ່າ ກຳແພງເມືອງນັ້ນກໍ່ມີຮາກເຖິງ ໑໒ ຊັ້ນ ແລະໃນບົດ ໒໒:໒ ໄດ້ບອກວ່າ ຕົ້ນໄມ້ແຫ່ງຊີວິດໄດ້ເກີດໝາກ ໑໒ ເທື່ອ

## ວ່າດ້ວຍສີແລະຄວາມໝາຍຂອງສີ:

ສີຂາວ : ໝາຍເຖິງຄວາມບໍລິສຸດແລະຄວາມຊອບທັມ

ສີດຳ : ໝາຍເຖິງຄວາມທຸກລຳບາກ ແລະການອຶດຢາກທໍຣະມານ

ສີແດງ: ໝາຍເຖິງເລືອດການຮົບຮາຂ້າຟັນກັນ ແລະໝາຍເຖິງ
ຄວາມຕາຍ

ສີແດງແກ່: ໝາຍເຖິງລັກສະນະຂອງກະສັດ

ສີຂຽວອ່ອນ: ໝາຍເຖິງເວລາສິ້ນສຸດຊີວິດ ຄືເຂົ້າສູ່ຄວາມຕາຍ

## ໜັງສືຄຳປາກົດກ່ຽວຂ້ອງກັບໜັງສືຫບັງແດ່:

ໃນບັນດາໜັງສືດ້ວຍກັນແລ້ວ ບໍ່ມີໜັງສືອັນໃດທີ່ກ່ຽວຂ້ອງກັບພຣະທັມຄັມພີຫລາຍເທົ່າກັບໜັງສືຄຳປາກົດນີ້

໑. ກ່ຽວຂ້ອງກັບພຣະຄັມພີເດີມ ໃນໜັງສືຄຳປາກົດມີຂໍ້ຢູ່ທັງໝົດ ໔໐໔ ຂໍ້ ໃນຂໍ້ທັງໝົດນີ້ມີຢູ່ ໒໗໘ ຂໍ້ທີ່ເອົາມາຈາກພຣະຄັມພີເດີມ ແຕ່ໄດ້ປ່ຽນການຂຽນໃຫ້ເປັນແບບໃໝ່ ສະນັ້ນເພື່ອຈະໃຫ້ເຂົ້າໃຈ ຄຳປາກົດໄດ້ດີ ຈັກຕ້ອງໃຫ້ຮູ້ຈັກເຣື່ອງໃນພຣະຄັມພີເດີມດ້ວຍ

໒. ກ່ຽວຂ້ອງກັບພຣະຄັມພີໃໝ່ ຄືເພີ່ມໄດ້ແບ່ງພຣະຄຣິສ-ຕະທັມຄັມພີທັງໝົດອອກເປັນ ໓ ພາກຄື

ພາກທີ ໑ ກ່ຽວດ້ວຍເຣື່ອງປະວັດສາດ ເຊັ່ນໜັງສືຕົ້ນເດີມເຖິງໜັງສືເອເຊເທເຣ ແລະໜັງສືມັດທາຍເຖິງກິຈການ

ພາກທີ ໒ ກ່ຽວດ້ວຍເຣື່ອງຄຳສອນ ເຊັ່ນໜັງສືໂຢບເຖິງບົດເພງແລະໜັງສືໂຣມເຖິງຢູເດ

ມາກທີ ມີ ກ່ຽວດ້ວຍເຣື່ອງຄຳທຳນວາຍ ເຊັ່ນໜັງສືເອຊາອີເຖິງມາລາກີ ແລະຄຳປາກົດ

໓. ກ່ຽວຂ້ອງກັບໜັງສືດານຽນ ໜັງສື ດານຽນ ໄດ້ ເວົ້າ ເຖິງ ອານາຈັກທັງສີ່ຄື: ອານາຈັກບາບີໂລນ ອານາຈັກເປເຣເຊ ອານາຈັກເຣເລັນ ແລະ ອານາຈັກໂຣມ ສ່ວນ ໜັງສື ຄຳປາກົດ ກໍເວົ້າ ເຖິງ ອານາຈັກໂຣມດ້ວຍແຕ່ໄດ້ເວົ້າສະເພາະຄາວສຸດທ້າຍຂອງອານາຈັກນີ້

໔. ກ່ຽວຂ້ອງກັບໜັງສືຕົ້ນເດີມ ໜັງສືຄຳປາກົດແລະໜັງສືຕົ້ນເດີມຕ່າງກໍເວົ້າເຖິງເຣື່ອງດຽວກັນ ຄືເວົ້າເຖິງແຜ່ນດິນໂລກ ເວົ້າເຖິງບ່ອນສຸກກະເສີມ ເວົ້າເຖິງຕົ້ນໄມ້ແລະນ້ຳ ເວົ້າເຖິງຜົວເມັຍ ແລະເວົ້າເຖິງເຈົ້າບ່າວເຈົ້າສາວ

## ໜັງສືຄຳປາກົດມີປະໂຍດຢ່າງໃດແດ່:

ເຖິງແມ່ນວ່າໜັງສືຄຳປາກົດຈະເປັນໜັງສືທີ່ເຂົ້າໃຈຍາກກໍດີ ກໍຍັງມີປະໂຍດແກ່ເຮົາຫລາຍຢ່າງຄື

໑. ເປີດເຜີຍໃຫ້ເຮົາເຫັນພຣະອົງເຈົ້າເຢຊູ ເຊັ່ນ

ກ. ຊ່ອຍໃຫ້ຮູ້ສະພາບຂອງພຣະອົງວ່າ ພຣະອົງຊົງເປັນຫຍັງແດ່

ຂ. ຊ່ອຍໃຫ້ຮູ້ກິຈການຂອງພຣະອົງ ວ່າພຣະອົງຊົງແຕ່ງຕັ້ງພວກຄຣິສຕະຈັກ ຊົງແຕ່ງຕັ້ງພວກຢູດາຂຶ້ນໃໝ່ແລະຊົງມີພາກສາໂລກ

ຄ. ຊ່ອຍໃຫ້ຮູ້ຈັກຜູ້ທີ່ພຣະອົງເຈົ້າເຢຊູຊົງກ່ຽວຂ້ອງ ຄືພຣະບິດາ

ພຣະອິນຍານ ພວກທູດສວັນ ພວກບໍຣິສຸດ ພວກຄົນບາບ ຟ້າສວັນ ແຜ່ນດິນໂລກແລະພົ້ນນາຣົກ

໔. ເປີດເຜີຍໃຫ້ເຫັນວ່າ ພຣະເຢຊູຊົງເປັນຫົວໜ້າແລະຊົງເປັນຜູ້ສຳຄັນ ເຊັ່ນ:

ກ. ຊົງເປັນສູນກາງແຫ່ງຄຣິສຕະຈັກ (ບົດ ໑–໓)

ຂ. ຊົງເປັນສູນກາງແຫ່ງຟ້າສວັນ (ບົດ ໔–໕)

ຄ. ຊົງເປັນຜູ້ປົກຄອງຄົນທີ່ບໍ່ເຊື່ອ (ບົດ ໖–໑໙)

ງ. ຊົງເປັນຜູ້ປົກຄອງຂນະເວລາພັນປີ (ບົດ ໑໙–໒໐)

ຈ. ຊົງເປັນສູນກາງກຸງເຢຣູຊາເລັມໃໝ່ (ບົດ ໒໑–໒໒)

໕. ໜັງສືນຊ່ອຍໃຫ້ຮູ້ຈັກວ່າ ໂລກນີ້ຈະສິ້ນສຸດລົງດ້ວຍວິທີໃດ

ຕັ້ງແຕ່ດັ້ງເດີມຈົນຕາບເທົ່າທຸກວັນນີ້ ຢູ່ໃນໂລກນີ້ໄດ້ມີການຕໍ່ສູ້ກັນຢູ່ບໍ່ຂາດ ຣະຫວ່າງຄວາມດີກັບຄວາມຊົ່ວ ຣະຫວ່າງແຈ້ງກັບມືດ ຣະຫວ່າງຄວາມຈິງກັບຄວາມເທັດ ຣະຫວ່າງຄວາມຊອບທັມກັບຄວາມອະທັມ ຣະຫວ່າງພຣະຄຣິດກັບມະຍາມານ ແຕ່ໜັງສືນີ້ໄດ້ເປີດເຜີຍໃຫ້ເຫັນຄວາມດີຊນະຄວາມຊົ່ວ ຄວາມແຈ້ງຊນະຄວາມມືດ ຄວາມຈິງຊນະຄວາມເທັດ ຄວາມຊອບທັມຊນະຄວາມອະທັມ ແລະພຣະຄຣິດຊນະຊາຕານພະຍາມານ

ວ່າດ້ວຍເນື້ອຄວາມ:

ໜັງສືຄຳປາກົດແມ່ນໜັງສືຈຳພວກນິມິດ ທີ່ທ່ານໂຢຮັນໄດ້ເຫັນເມື່ອວັນອາທິດຢູ່ເກາະປັດໂມ (໑:໑໐) ນິມິດເຫລົ່ານີ້ບາງຢ່າງກໍເຫັນເປັນ

ຕົວຈິງແທ້ ເປັນຕົ້ນວ່າ ອົງພຣະຜູ້ເປັນເຈົ້າ ພວກທູດສວັນຫລືພວກບໍຣິສຸດ ແຕ່ສ່ວນຫລາຍແລ້ວໄດ້ເຫັນນິມິດໄປໃນທາງປຽບທຽບ ຄືໄດ້ເຫັນເປັນຮູບມ້າ (໖:໑–໘) ເຫັນດວງດາວຕົກລົງມາຈາກທ້ອງຟ້າ (໙:໑) ເຫັນຜູ້ຍິງຢືນຢູ່ໃນທ່າມກາງດວງຕາເວັນ (໑໒:໑) ເຫັນສັດຮ້າຍ (໑໓:໑) ອັນນຶ່ງຂໍໃຫ້ເຂົ້າໃຈວ່າ ນິມິດທັງຫລາຍເຫລົ່ານີ້ທ່ານໂຢຮັນໄດ້ຂຽນພາຍຫລັງທີ່ໄດ້ເຫັນແລ້ວບໍ່ແມ່ນຂຶ້ນກ່ອນໄດ້ເຫັນ ດັ່ງນິມິດທີ່ເຫັນເປັນອົງພຣະຜູ້ເປັນເຈົ້າໃນບົດ ໑:໙–໒໐ ກໍໄດ້ມີໃນຈົດໝາຍທັງເຈັດຄືໃນບົດ ໒–໓ ແລ້ວ ສ່ວນການພິພາກສາຕາມປະທັບຕາທັງ ໖ ໃນບົດ ໖ ແລະໜັງສືຕິດຕາປະທັບໄວ້ໃນບົດ ໔–໕ ກໍຄືນິມິດທີ່ເຫັນເປັນພຣະທີ່ນັ່ງໃນຟ້າສວັນ ເພາະວ່າສັບພະສິ່ງທັງປວງ

ທີ່ເກີດຂຶ້ນໃນໂລກນີ້ ໄດ້ເກີດຂຶ້ນຕາມນ້ຳພຣະໄທຂອງພຣະເຈົ້າ ຜູ້ຊົງສະຖິດຢູ່ເທິງຟ້າສວັນ ບໍ່ມີສິ່ງໃດທີ່ບັງເກີດຂຶ້ນນອກຈາກນ້ຳພຣະໄທຂອງພຣະເຈົ້າ

ອີກຢ່າງນຶ່ງ ຢ່າເຂົ້າໃຈວ່າ ເຫດການຕ່າງໆ ຈະເກີດຂຶ້ນຕາມລຳດັບທີ່ຂຽນໄວ້ ເຊັ່ນການພິພາກສາທີ່ຂຽນໄວ້ເຖິງ ໗ ຄັ້ງ ຄືໃນບົດ ໖;໘,໙ ແລະບົດ ໑໖ ນັ້ນ ກໍບໍ່ແມ່ນວ່າໄດ້ເກີດຂຶ້ນໃນຄາວດຽວກັນ ນອກເສັຽແຕ່ວ່າບົດທີ ໘,໙ ເທົ່ານັ້ນທີ່ເກີດຂຶ້ນໃນຄາວດຽວກັນກັບບົດທີ ໖ ສ່ວນເຫດການນອກນັ້ນໄດ້ເກີດຂຶ້ນໃນຄາວຕ່າງກັນ

ວ່າດ້ວຍພວກຂອງພຣະອົງ:

ຄຳວ່າ ພວກຂອງພຣະອົງນັ້ນ ຄືຜູ້ທີ່ພຣະອົງຈະຮັກສາໄວ້ບໍ່ໃຫ້ຖືກພິພາກສາ ຊຶ່ງມີລັກສນະແລະການປຽບທຽບດັ່ງນີ້

໑. ໃນບົດທີ ໗ ໄດ້ມີເລຂ ໑໔໔.000 ຊຶ່ງເປັນເລຂທີ່ໄດ້ມາຈາກເລຂ ໑໒ (ຄືເລຂແຫ່ງຄວາມສຳເຣັດຂອງພຣະເຈົ້າ) ຄູນກັບຕົວມັນເອງ ໑ ຄັ້ງ ແລ້ວເອົາຈຳນວນພັນ ຄືເລຂທີ່ໝາຍເຖິງສ່ວນໃຫຍ່ມາຄູນອີກນຶ່ງຄັ້ງ ເມື່ອຂຽນເປັນສູດກໍ່ຈະໄດ້ດັ່ງນີ້ ໑໒×໑໒×໑000= ໑໔໔.000

໒. ໃນບົດທີ ໑໒ ພວກຂອງພຣະອົງປຽບເໝືອນຜູ້ຍິງ ຊຶ່ງຊາຕານກຳລັງຊອກຫາແຕ່ບໍ່ພົບ ຜູ້ຍິງນີ້ໄດ້ແກ່ພວກຢູເດແລະຄຣິສຕະຈັກ

໓. ໃນບົດ ໑໔:໑–໕ ວ່າດ້ວຍເລຂ ໑໔໔.000 ທີ່ຖືກໄຖ່ໄວ້ແລ້ວ ເລຂນີ້ເປັນນິມິດຂອງຄົນທີ່ເຊື່ອແລ້ວທັງຫລາຍ

໔. ໃນບົດທີ ໑໙:໑–໑໐ ວ່າດ້ວຍການສົມຣົດລູກແກະ ນີ້ເປັນຂໍ້ປຽບທຽບທີ່ສະແດງວ່າ ພຣະຄຣິດຈະຕ້ອນຮັບພວກຄຣິສຕະຈັກໃນຟ້າສວັນຢ່າງໃດແດ່

໕. ໃນບົດທີ ໒໐:໑–໖ ວ່າດ້ວຍການຄືນມາຈາກຕາຍຂອງພວກບໍຣິສຸດ ແລະວ່າດ້ວຍການສເວີຍຣາຊຂອງອົງພຣະຄຣິດໃນຣະຫວ່າງພັນປີ

ການແບ່ງເປັນພາກ:

ຄຳນຳ ໑:໑–໘

ພາກທີ ໑ ວ່າດ້ວຍນິມິດແຫ່ງພຣະຄຸນ ໑:໙–໓:໒໒

ກ. ອົງພຣະຄຣິດຊົງປາກົດໃນທ່າມກາງຄຣິສຕະຈັກ ບົດ ໑:໙–໑໑

ຂ. ຈົດໝາຍທີ່ໄປເຖິງຄຣິສຕະຈັກທັງເຈັດ ບົດ ໒–໓

໑. ເອເຟັດ ໒:໑–໗

໒. ຊະມີນາ ໒:໘–໑໑

໓. ເປຄາໂມ ໒:໑໒–໑໗

໔. ທົວເທຣາ ໒:໑໘–໒໙

໕. ຊາເດ ບົດ ໓:໑–໖

໖. ຟີລາເດັນເຟຍ ບົດ ໓:໗–໑໓

໗. ລາວດີເກອາ ບົດ ໓:໑໔–໒໒

ພາກທີ ໒ ວ່າດ້ວຍນິມິດແຫ່ງການປົກຄອງ ແລະພິພາກສາ ບົດ ໔:໑–໑໙:໑໐

໑. ພຣະທີ່ນັ່ງໃນຟ້າສວັນແລະພັງສືທີ່ຕິດຕາປະທັບໄວ້ ບົດ ໔–໕

໒. ການແກ້ຕາປະທັບທັງ ໗ ອັນ ບົດ ໖–໘:໕

ກ. ເຫດການທີ່ເກີດຂຶ້ນເມື່ອແກ້

ຕາປະທັບທັງ ໖ ອອກ ບົດ ໖:໑–໑໗

ຂ. ພອນຂອງພຣະອົງບໍ່ຖືກການ

ພິພາກສາ ບົດ ໗

ຄ. ການແກ້ຕາປະທັບໜ່ວຍທີ ໗ ບົດ ໘:໑–໕

໓. ທູດສວັນເປົ່າແກທັງ ໗ ບົດ ໘:໖–໑໑:໑໙

ກ. ເຫດການທີ່ເກີດຂຶ້ນເມື່ອ

ເປົ່າແກທັງ ໖ ບົດ ໘:໖–໙:໒໑

ຂ. ໜັງສືນ້ອຍທີ່ທ່ານໂຢຮັນກິນ ບົດ ໑໐

ຄ. ພະຍານສອງຄົນ ບົດ ໑໑:໑–໑໔

ງ. ການເປົ່າແກໜ່ວຍທີ ໗ ບົດ ໑໑:໑໕–໑໙

໔. ການຕໍ່ສູ້ກັນລະຫວ່າງພຣະເຈົ້າ

ກັບພະຍາມານ ບົດ ໑໒–໑໔

ກ. ຜູ້ຍິງກັບມັງກອນ ບົດ ໑໒

ຂ. ສັດຮ້າຍສອງໂຕ ບົດ ໑໓

ຄ. ພອນຂອງພຣະອົງກັບທູດ

ສວັນທັງ ໖ ບົດ ໑໔

໕. ພວກທູດສວັນຖອກທາຂັນ ໗

ໜ່ວຍຂອງພຣະເຈົ້າ ບົດ ໑໕–໑໖

ກ. ພວກຂອງພຣະອົງໃນຟ້າສວັນ ບົດ ໑໕

ຂ. ເຫດການທີ່ເກີດຂຶ້ນເມື່ອເວລາ
ຖອກຂັນ ບົດ ໑໖

໖. ເມືອງບາບີໂລນຖືກທຳລາຍ ບົດ ໑໗:໑–໑໙:໑໐

ກ. ການພິພາກສາ ບົດ ໑໗–໑໘

ຂ. ການຊະນະ ບົດ ໑໙:໑–໑໐

ພາກທີ ໓ ວ່າດ້ວຍບົບນີວແຫ່ງອັລນີ ບົດ ໑໙:໑໑–໒໒:໕

໑. ການສເວີຍຣາດພັນປີ ບົດ ໑໙:໑໑–໒໐:໑໕

ກ. ກ່ອນສເວີຍຣາດນັ້ນ ບົດ ໑໙:໑໑–໒໐:໓

ຂ. ເມື່ອການສເວີຍຣາດນັ້ນ ບົດ ໒໐:໔–໖

ຄ. ພາຍຫລັງການສເວີຍຣາດນັ້ນ ບົດ ໒໐:໗–໑໕

໒. ກຸງເຢຣູຊາເລັມໃໝ່ ບົດ ໒໑:໑–໒໒:໕

ກ. ເມື່ອກຸງເຢຣູຊາເລັມລົງມາ
ຈາກສວັນ ບົດ ໒໑:໑–໘

ຂ. ສະພາບຂອງກຸງເຢຣູຊາເລັມ ບົດ ໒໑:໙–໒໑

ຄ. ຄວາມຈະເຣີນຮຸ່ງເຮືອງແລະ
ຄວາມມ່ວນຊື່ນ ບົດ ໒໑:໒໒–໒໒:໕

໓. ຄຳສຸດທ້າຍ ບົດ ໒໒:໖–໒໑

ພິມທີ່ ໂຮງພິມແສງສິລປ

[illegible]